ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 15 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 14 ມີນາ 2023

# ແຈ້ງການ

ເຖິງ: ທ່ານ ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ແລະ ບັນດາບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ເລື່ອງ: ການປະເມີນການຈັດຕັ້ງປະຕິບັດ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 05/ຄຄຊ, ລົງວັນທີ 29 ເມສາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 11/ຄຄຊ ລົງວັນທີ 26 ເມສາ 2019.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ດັ່ງນີ້:

1. ໃຫ້ ຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ບັນດາບໍລິສັດຈົດທະບຽນໃນ ຕລຊລ ເລີ່ມປະເມີນການຈັດຕັ້ງປະຕິບັດ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນ ຕລຊລ ຢ່າງເປັນທາງການ ນັບແຕ່ເດືອນ ເມສາ 2023 ເປັນຕົ້ນໄປ;
2. ມອບໃຫ້ ຕລຊລ ເປັນຜູ້ດຳເນີນການປະເມີນ ແລະ ທົບທວນການປະເມີນການຈັດຕັ້ງປະຕິບັດ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນ ຕລຊລ ພ້ອມທັງ ສ້າງຄຳແນະນຳໃນການປະເມີນດັ່ງກ່າວ ເພື່ອເປັນບ່ອນອີງໃຫ້ແກ່ ຕລຊລ ແລະ ບັນດາບໍລິສັດຈົດທະບຽນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີຄວາມຄ່ອງຕົວ;

3. ໃຫ້ ຕລຊລ ລາຍງານຜົນການປະເມີນດັ່ງກ່າວ ພາຍຫຼັງ ສຳເລັດການປະເມີນໃນແຕ່ລະປີ ແລະ ລາຍງານແຜນການເຄື່ອນໄຫວກ່ຽວກັບວຽກງານການຄຸ້ມຄອງບໍລິຫານ ໃນແຕ່ລະໄລຍະ ມາຍັງ ສຄຄຊ ຢ່າງເປັນທາງການ ເພື່ອໃຫ້ ສຄຄຊ ຕິດຕາມການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ໄດ້ຮັບຜົນດີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຫົວໜ້າສຳນັກງານ

ພອງຈິນດາ ແສງສຸລິວົງ